ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1064 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 4 ມິຖຸນາ 2012.

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດລາຍການສິນຄ້າຄວບຄຸມລາຄາ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ເລກທີ 522/ນຍ, ລົງວັນທີ 23/12/2011;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ສະບັບເລກທີ 474/ນຍ, ລົງວັນທີ 18/11/2010.

### ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

ມາດຕາ 1. ກຳນົດລາຍການສິນຄ້າຄວບຄຸມລາຄາ ຕາມ "ບັນຊີ ກ" ແລະ ລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ ຕາມ "ບັນຊີ ຂ" ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 2. ລາຍການສິນຄ້າຄວບຄຸມລາຄາ ໝາຍເຖິງ ລາຍການສິນຄ້າທີ່ມີຄວາມອ່ອນໄຫວສູງ, ມີຄວາມຈຳເປັນ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມ.

ມາດຕາ 3. ລາຍການສິນຄ້າຄວບຄຸມລາຄາ ຕາມ "ບັນຊີ ກ" ສາມາດເພີ່ມ ຫຼື ຫຼຸດ ຕາມຄວາມເໝາະສົມ ແລະ ຄວາມຈຳເປັນໃນແຕ່ລະໄລຍະ.

ມາດຕາ 4. ຫ້າມ ເພີ່ມ ຫຼື ຫຼຸດ ບັນຊີລາຍການສິນຄ້າຄວບຄຸມລາຄາ ຕາມ "ບັນຊີ ກ" ໂດຍບໍ່ໄດ້ຮັບອະນຸຍາດ.

ມາດຕາ 5. ອົງການຄຸ້ມຄອງລາຄາແຕ່ລະຂັ້ນຕ້ອງເປັນເຈົ້າການເຜີຍແຜ່, ແນະນຳ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງລາຄາຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ມາດຕາ 6. ຫ້ອງການ, ສະຖາບັນ ແລະ ບັນດາກົມອ້ອມຂ້າງ ກະຊວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 7. ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກ